# ລະບົບກະສິກໍາຮ່ວມສໍາພັນກ່ຽວກັບ - ກຸ່ມຜະລິດຜັກອິນຊີ ບ້ານໂນນແຕ້

ກອງປະຊຸມປຶກສາຫາລືດ້ານນະໂຍບາຍ
29 ມິຖຸນາ 2018

**ນໍາສະເໜີ: ຄໍາພູ ພັນທະບຸນ**

# ປະຫວັດຄວາມເປັນມາ

- ເບື້ອງຕົ້ນ ແມ່ນສ້າງຕັ້ງມາຈາກກຸ່ມຜັກອິນຊີນະຄອນຫຼວງ ໃນປີ 2005 ມີສະມາຊິກ ເຂົ້າຮ່ວມຈາກ 5 ຕົວເມືອງໃນນະຄອນຫຼວງ ເຊັ່ນ: ເມືອງໄຊທານີ, ເມືອງໄຊເສດຖາ, ເມືອງ ຫາດຊາຍຟອງ, ເມືອງນາຊາຍທອງ ແລະ ເມືອງສີໂຄດຕະບອງ ເຊິ່ງມີສະມາຊິກທັງໝົດ: 10 ກຸ່ມ
- ກິດຈະກຳຫຼັກ: (1) ປູກຜັກອິນຊີເປັນສິນຄ້າ, (2) ຜະລິດຝຸ່ນຊີວະພາບ, (3) ປູກໄມ້ໃຫ້ໝາກ, (4) ຈັດຝຶກອົບຮົມ.
- *ໃນປີ 2017, ອີງຕາມການແຈ້ງການຂອງ ຫ້ອງການກະສິກຳນະຄອນຫຼວງ. ກຸ່ມບ້ານໂນນແຕ້ ໄດ້ແຍກອອກມາບໍລິຫານກຸ່ມເອງ*

# ຈຸດສຸມຂອງໂຄງການ ແລະ ກົນໄກການຄຸ້ມຄອງ

ພື້ນທີ່ຕັ້ງ: ບ້ານໂນນແຕ້, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

- ***ເລີ່ມຕົ້ນໃນປີ 2005:*** ມີຈຳນວນສະມາຊິກທັງໝົດ: 38 ຄອບຄົວ ແລະ ມີເນື້ອທີການຜະລິດທັງໝົດ: ມີ 47 ເຮັກຕາ

- ***ປັດຈຸບັນ:*** ມີຈຳນວນສະມາຊິກ ຮັບມາໃຫມ່ໃນປີ 2018 ທັງໝົດ: 53 ຄອບຄົວ ແລະ ມີເນື້ອທີການຜະລິດທັງໝົດ 75 ເຮັກຕາ.

  *(ເຫດຜົນທີ່ຈຳນວນຄອບຄົວເພີ່ມຂຶ້ນຈາກ 38 ຫາ 53 ຄອບຄົວ )*

## ກົນໄກການຄຸ້ມຄອງ:

- ສະມາຊິກມີການໝູນວຽນກັນໄປຂາຍ (ສະຖານທີ່ຂາຍ: ໄອເຕັກ)
- ມີການຄວບຄຸມຄຸນນະພາບ ພາຍໃນກຸ່ມ
- ການປູກຜັກແມ່ນປູກໂດຍຄົວເຮືອນ (ປູກຢູ່ໃນທີ່ຂອງຊາວກະສິກອນ)

# ລາຍຮັບຂອງຄອບຄົວຈາກການປູກຜັກສະຫລັດອິນຊີເປັນສິນຄ້າ

**ຕົ້ນທຶນການຜະລິດໃນ 1 ຮອບວຽນ ປະມານ 1-2 ເດືອນ ໃນເນື້ອທີ່ 1600 ມ$^2$**

| ລ/ດ | ຄ່າໃຊ້ຈ່າຍ | ລາຄາ/ມູນຄ່າ (ກີບ) |
|---|---|---|
| 1 | ຊື້ແນວພັນຜັກ | 100,000 |
| 2 | ຊື້ຝຸ່ນຊີວະພາບ | 180,000 |
| 3 | ຄ່າແຮງງານຕຽມດິນ,ປູກ ແລະ ບົວລະບັດຮັກສາ 50,000 ກີບ X 10 ວັນງານX 2 ແຮງງານ | 1,000,000 |
| 4 | ຄ່າຂົນສົ່ງ | 320,000 |
| 5 | ຄ່າເຊົ່າຕະຫຼາດ: | 180,000 |
| 6 | ຄ່າໃຊ້ຈ່າຍອື່ນໆ 50,000 ກີບ. | 50,000 |
| | ລວມຄ່າໃຊ້ຈ່າຍທັງໝົດ | 1,830,000 |

**ລາຍຮັບສະເລ່ຍ = 820,000 ກີບ/ 1ຮອບວຽນ**

**(ຂາຍຜົນຜະລິດ 2,650,000 ກີບ - ລວມຄ່າໃຊ້ຈ່າຍທັງໝົດ 1,830,000 ກີບ = ລາຍຮັບສະເລ່ຍ 730,000 ກີບ/ 1ຮອບວຽນ)**

# ຕ່ອງໂສ້ລະບົບການຜະລິດ ແລະ ຕ່ອງໂສ້ການຕະຫຼາດ

ປັດໃຈນຳເຂົ້າການຜະລິດ
-ແນວພັນ
-ຝຸ່ນຊີວະພາບ

→

ເຕັກນິກການປູກ
-ການປູກຜັກໃນເຮືອນຮົ່ມ
-ການໃຊ້ລະບົບນ້ຳບາດານ

↓

ການເກັບກ່ຽວ; ລ້າງ ທຳຄວາມສະອາດ, ບັນຈຸໃສ່ຖົງ ເພື່ອຂົນສົ່ງ

←

ການຂົນສົ່ງ

↓

ການຕະຫຼາດມີການໝູນວຽນກັນມາຂາຍຂອງສະມາຊິກໃນກຸ່ມ
ສະຖານທີ່: ໂຂເຕັກ
ເວລາຂາຍ: 4 ວັນ / 1 ອາທິດ (ວັນຈັນ, ວັນພຸດ, ວັນພະຫັດ , ວັນເສົາ)

# ບັນຫາ ແລະ ສິ່ງທ້າທາຍ

1. ຂາດເຕັກນິກການຜະລິດເມັດພັນ, ການເກັບຮັກສາ, ການພັດທະນາຄຸນນະພາບເມັດພັນ;
2. ຂາດເຕັກນິກການເຮັດຝຸ່ນບົ່ມທີ່ມີຄຸນນະພາບ;
3. ຍັງບໍ່ມີແຫຼ່ງຈຳໜ່າຍທີ່ຖາວອນ (ມີການເຄື່ອນຍ້າຍສະຖານທີ່ຂາຍ);
4. ຊ່ອງທາງໃນການຂາຍຍັງມີ ຈຳກັດ (ພຽງແຕ່ຂາຍຕາມສະຖານທີ່ທີ່ກຳນົດໄວ້ໃຫ້)
5. ຂາດເຕັກນິກການຫຸ້ມຫໍ່ຜະລິດຕະພັນທີ່ໄດ້ມາດຕະຖານ;
6. ຂາດເຕັກນິກການຮັກສາຫຼັງການເກັບກ່ຽວ;

# ຄວາມຕ້ອງການໃນການສ້າງຂີດຄວາມສາມາດ

| ລ/ດ | ຫົວຂໍ້ | ຜູ້ທີ່ຕ້ອງການ |
|---|---|---|
| 1 | ຝຶກອົບຮົມກ່ຽວກັບ ການຜະລິດເມັດພັນຜັກ; ຝຸ່ນຊີວະພາບ ແລະ ຝຸ່ນບົ່ມ | • ຊາວກະສິກອນ<br>• ກົມປູກຝັງ (ສູນເວີນຄໍາ, ສູນສາລະຄໍາ) |
| 2 | ຝຶກອົບຮົມກ່ຽວກັບການຄວບຄຸມ ຄຸນນະພາບ ແລະ ມາດຕະຖານກ່ຽວກັບຜັກປອດສານພິດ | • ຊາວກະສິກອນ<br>ກົມປູກຝັງ (ພະແນກ ມາດຕະຖານ, ສູນເວີນຄໍາ) |
| 3 | ຝຶກອົບຮົມກ່ຽວກັບ ການວິເຄາະ ແລະ ຄຸ້ມຄອງການຕະຫຼາດ | • ຊາວກະສິກອນ |

# ຂໍ້ສະເໜີ

| ລ/ດ | ຂໍ້ສະເໜີ | ພາກສ່ວນຮັບຜິດຊອບ |
|---|---|---|
| 1 | ສ້າງຂີດຄວາມສາມາດ ໃນການຜະລິດ ເມັດ ພັນຜັກ; ຝຸ່ນຊີວະພາບ ແລະ ຝຸ່ນບົ່ມ | • ສະຖາບັນຄົ້ນຄ້ວາ (ສູນພືດພັນ)<br>• ບັນດາໂຄງການຊ່ວຍເຫຼືອ |
| 2 | ສ້າງຂີດຄວາມສາມາດ ໃນການວິເຄາະຕ່ອງໂສ້ການ ຕະຫຼາດ ແລະ ຊ່ອງທາງການຕະຫຼາດ | • ຫ້ອງການກະສິກໍາແລະປ່າໄມ້ເມືອງ,<br>• ບັນດາໂຄງການຊ່ວຍເຫຼືອ |
| 3 | ສ້າງບຸກຄະລາກອນຜູ້ກວດກາ, ຄຸ້ມຄອງຄຸນນະພາບການຜະລິດຜັກອິນຊີ (ມີຄວາມຮູ້ດ້ານລະບຽບການ ແລະ ມາດຕະຖານ) | • ກົມປູກຝັງ<br>• ກົມສົ່ງເສີມ ແລະ ປຸງແຕ່ງກະສິກໍາ |
| 4 | ຈັດສັນຕະຫຼາດ (ສະຖານທີ່ຂາຍ) ຖາວອນ | • ພະແນກກະສິກໍາ ແລະ ປ່າໄມ້ນະຄອນຫຼວງ<br>• ກ.ຊ ກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ |
| 5 | ສົ່ງເສີມການຜະລິດຜັກປອດສານພິດໃຫ້ກາຍເປັນ ODOP | ກະຊວງອຸດສາຫະກໍາ ແລະ ການຄ້າ |




# ຂອບໃຈ
# Thank you





